# ແຮງງານຂ້າມຊາດຈາກ ບັນດາປະເທດ CLMV ໃນປະເທດໄທ






2018 → 2022

4.9 ລ້ານຄົນ → 3 ລ້ານຄົນ

**2,738,190** ຄົນ
ແຮງງານຂ້າມຊາດທີ່ມີທັກສະຕ່ຳຈາກບັນດາປະເທດ CLMV (ຂໍ້ມູນໃນວັນທີ 22 ກັນຍາ)






44%
ເພດຍິງ



46%
ເພດຊາຍ

ສະຖິຕິແຮງງານຂ້າມຊາດປະຈຳເດືອນ ຈາກສຳນັກງານບໍລິຫານແຮງງານຕ່າງດ້າວ, ກະຊວງແຮງງານ www.doe.go.th/alien


มิตรไทย www.mitrthai.com Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE POVERTY REDUCTION THROUGH SAFE MIGRATION, SKILLS DEVELOPEMENT AND ENHANCED JOB PLACEMENT

# ຮູບແບບຂອງໃບອະນຸຍາດເຮັດວຽກ ຫລັງ ໄລຍະ COVID-19 ສໍາລັບແຮງງານ ຂ້າມຊາດ CLM




**1) ແຮງງານ MOU; 2) ກຸ່ມແຮງງານ MOU ພິເສດ** (ໂດຍຜ່ານການຂະຫຍາຍພາຍໃນປະເທດໃນລະຫວ່າງການແຜ່ລະບາດຂອງພະຍາດ COVID-19) ໃນປະເທດໄທນັບຕັ້ງແຕ່ຄະນະລັດຖະມົນຕີໄດ້ມີມະຕິຕົກລົງວັນທີ 20 ສິງຫາ 2019

**3) ຜູ້ຍ້າຍຖິ່ນຖານທີ່ໄດ້ຂຶ້ນທະບຽນ**, ເຊິ່ງມີໃບອະນຸຍາດເຮັດວຽກທີ່ມີຢູ່ໃນລະຫວ່າງການແຜ່ລະບາດຂອງພະຍາດ COVID-19 ( ມະຕິຂອງຄະນະລັດຖະມົນຕີລົງວັນທີ 5 ກໍລະກົດ 2022); **4) ກຸ່ມທີ່ໄດ້ຂຶ້ນທະບຽນໃຫມ່** (ມະຕິຂອງຄະນະຄະນະລັດຖະມົນຕີ ລົງວັນທີ 29 ທັນວາ 2020, 28 ກັນຍາ 2021 ແລະ 5 ກໍລະກົດ 2022)




**5) ຄົນງານປະມົງທະເລ**ຕາມມາດຕາ 83 ຂອງບົດບັນຍັດວ່າດ້ວຍການປະມົງທະເລທີ່ກົມປະມົງໄດ້ກໍານົດ

**6) ແຮງງານຂ້າມຊາດຕາມລະດູການ** (ໃບອະນຸຍາດເຮັດວຽກ 90 ວັນ ແທນທີ່ຈະເປັນ 2 ປີ, ໂດຍໃຊ້ໃບຜ່ານແດນຖາວອນ, ແທນທີ່ຈະເປັນຫນັງສືຜ່ານແດນ(ປັດສະປໍ) ຫລືໃບຮັບຮອງຕົວຕົນເພື່ອໃຊ້ໃນການຍື່ນຂໍສະຫມັກ)




***ທ່ານຮູ້ບໍ່ວ່າ**, ການເກັບຄ່າທໍານຽມສໍາລັບການຈັດຫາງານໃຫ້ກັບແຮງງານຂ້າມຊາດ MOU ຢູ່ປະເທດໄທນັ້ນ, ແມ່ນສິ່ງທີ່ເກືອດຫ້າມ*


มิตรไทย
www.mitrthai.com
Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE

# ຜູ້ທີ່ຕິດຕາມ ແລະສະມາຊິກຄອບຄົວ ຂອງແຮງງານຂ້າມຊາດ



1) ແຮງງານຂ້າມຊາດທີ່ຢູ່ພາຍໃຕ້ MOU ໃນປະຈຸບັນນີ້, ແມ່ນບໍ່ໄດ້ຮັບອະນຸຍາດໃຫ້ນຳສະມາຊິກຄອບຄົວເຂົ້າມາອາໄສຢູ່ກັບພວກເຂົາເຈົ້າໃນປະເທດໄທ



2) ແຮງງານຂ້າມຊາດທີ່ກຳລັງຜ່ານຂະບວນການເພື່ອເຮັດໃຫ້ຖືກຕ້ອງຕາມກົດຫມາຍຢູ່ປະເທດໄທນັ້ນ, ກໍ່ສາມາດຂຶ້ນທະບຽນກັບກົມຈັດຫາງານ, ກະຊວງແຮງງານ ເພື່ອຮັບໃບອະນຸຍາດເຮັດວຽກແບບສະເພາະ, ພາຍຫຼັງທີ່ມີອາຍຸຄົບ 18 ປີ



3) ເດັກນ້ອຍທຸກຄົນໃນປະເທດໄທ ບໍ່ວ່າຈະເປັນຄົນສັນຊາດໃດກໍ່ຕາມ, ກໍ່ມີສິດທີ່ຈະໄດ້ຮັບການສຶກສາຂັ້ນພື້ນຖານ 12 ປີ ໂດຍບໍ່ເສຍຄ່າໃຊ້ຈ່າຍໃດໆ




# ມະຕິຂອງຄະນະ ລັດຖະມົນຕີ ວັນທີ 5 ກໍລະກົດ 2022



1) ແຮງງານຂ້າມຊາດທີ່ໄດ້ຂຶ້ນທະບຽນແລ້ວ, ເຊິ່ງໄດ້ຮັບການປະທັບຕາວີຊ່າໃນວັນທີ 1 ສິງຫາ 2022 ແມ່ນມີສິດຢູ່ແລະເຮັດວຽກຢູ່ໃນປະເທດໄທຕໍ່ໄປໄດ້ອີກ 2 ປີ ຈົນໄປເຖິງວັນທີ 13 ກຸມພາ 2025

2) ຜູ້ທີ່ບໍ່ມີວີຊ່າປະທັບຕາພາຍໃນເດືອນສິງຫາ 2022 ນັ້ນ, ກໍ່ສາມາດສືບຕໍ່ດໍາເນີນການຂັ້ນຕອນນີ້ໄດ້ພາຍໃນວັນທີ 13 ກຸມພາ 2023 ແລະ ກໍ່ຈະໄດ້ຮັບວີຊ່າ 1 ປີ ແລະ ໃບອະນຸຍາດເຮັດວຽກຈົນຮອດວັນທີ 13 ກຸມພາ 2024, ເຊິ່ງສາມາດຕໍ່ອາຍຸໄດ້ຕື່ມອີກ 1 ປີ ຈົນຮອດວັນທີ 13 ກຸມພາ 2025




3) ແຮງງານຂ້າມຊາດທີ່ໄດ້ຂຶ້ນທະບຽນໃຫມ່(1-15 ສິງຫາ 2022) ກໍ່ຈະສາມາດຢູ່ ແລະ ເຮັດວຽກຢູ່ປະເທດໄທໄດ້ຈົນຮອດວັນທີ 13 ກຸມພາ 2023 ແລະ ກໍ່ສາມາດຕໍ່ອາຍຸໃບອະນຸຍາດເຮັດວຽກຂອງເຂົາເຈົ້າໄດ້ສອງຄັ້ງ, ຄັ້ງລະຫນຶ່ງປີ

*ບັດສີບົວຕ້ອງໄດ້ຮັບຈາກທີ່ວ່າການອຳເພີພາຍໃນວັນທີ 13 ກຸມພາ 2025*

*ສູນອອກໃບຮັບຮອງຕົວຕົນຂອງແຮງງານຂ້າມຊາດມຽນມາຈະເປີດໃຫ້ບໍລິການຢູ່ຈັງຫວັດຊົນບູລີ, ສະມຸດປະການ, ສະມຸດສາຄອນ ແລະຣະນອງ*

มิตรไทย www.mitrthai.com Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE

# ເອກະສານສຳລັບແຮງງານຂ້າມຊາດທີ່ໃຊ້ໃນການເຮັດວຽກຢູ່ປະເທດໄທ




ໜັງສືຮັບຮອງສະຖານະບຸກຄົນ (CI)




ໜັງສືຜ່ານແດນ (PP)

ບັດຜ່ານແດນຖາວອນ

ໃບອະນຸຍາດເຮັດວຽກ/ບັດສີບົວ

ວີຊ່າ

มิตรไทย www.mitrthai.com
Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE




# ຄຳແນະນຳກ່ຽວກັບ ໃບອະນຸຍາດເຮັດວຽກ



ແຮງງານຂ້າມຊາດຄວນເກັບຮັກສາໃບອະນຸຍາດເຮັດວຽກຂອງຕົນໄວ້ຢູ່ບ່ອນທີ່ຕົນເອງເຫັນວ່າສະດວກ, ເພື່ອທີ່ຈະນຳໄປສະແດງຕໍ່ເຈົ້າຫນ້າທີ່ໄດ້ທຸກເວລາ, ໃນກໍລະນີທີ່ເຂົາເຈົ້າຂໍກວດເບິ່ງໃນເວລາເຮັດວຽກ. ກໍ່ບໍ່ແມ່ນສິ່ງທີ່ຈຳເປັນສະເຫມີໄປສຳລັບແຮງງານຂ້າມຊາດ, ທີ່ຈະຕ້ອງເອົາເອກະສານຕິດຕົວກັບຕົນເອງ. **ຖ້າຫາກບໍ່ສະແດງໃບອະນຸຍາດເຮັດວຽກຕໍ່ເຈົ້າຫນ້າທີ່ທີ່ກ່ຽວຂ້ອງຕາມກຳນົດເວລາ, ແຮງງານຂ້າມຊາດກໍ່ຈະຖືກປັບໃຫມບໍ່ເກີນ 5.000 ບາດ**




ແຮງງານຂ້າມຊາດຕ້ອງຍື່ນຂໍຕໍ່ອາຍຸໃບອະນຸຍາດເຮັດວຽກກ່ອນທີ່ຈະໝົດອາຍຸ ແຮງງານຂ້າມຊາດສາມາດຍື່ນຄຳຮ້ອງຂໍການຕໍ່ອາຍຸໃບອະນຸຍາດເຮັດວຽກ **ພາຍໃນ 30 ມື້ກ່ອນທີ່ຈະຫມົດອາຍຸ**

ຫ້າມບໍ່ໃຫ້ນາຍຈ້າງ, ຫລືບຸກຄົນອື່ນຍຶດເອກະສານປະຈຳຕົວ ແລະໃບອະນຸຍາດເຮັດວຽກຂອງແຮງງານຂ້າມຊາດນັ້ນໄວ້



ການຝາກເອກະສານປະຈຳຕົວຂອງແຮງງານຂ້າມຊາດກໍ່ຕ້ອງເປັນໄປຕາມຄວາມສະຫມັກໃຈ. ເມື່ອແຮງງານຂ້າມຊາດຂໍ ຫລືຕ້ອງການໃຊ້ເອກະສານ, ນາຍຈ້າງກໍ່ຕ້ອງໃຫ້ຮັບຄືນເອກະສານໃຫ້ແກ່ເຂົາເຈົ້າໂດຍໄວ **ຖ້າບໍ່ດັ່ງນັ້ນ, ກໍ່ຈະຖືກຈຳຄຸກບໍ່ເກີນ 6 ເດືອນ ຫລື ປັບໃຫມຕັ້ງແຕ່ 10,000-100,000 ບາດ ຫລື ທັງຈຳທັງປັບ**

มิตรไทย www.mitrthai.com Migrant Working Group IOM UN MIGRATION Swiss Agency for Development and Cooperation SDC PROMISE



# ວຽກປະເພດຕ່າງໆ ທີ່ແຮງງານຂ້າມຊາດ MOU ສາມາດເຮັດໄດ້

## ແຮງງານຂ້າມຊາດສາມາດເຮັດວຽກເປັນ ແຮງງານແລະເປັນພະນັກງານຂາຍເຄື່ອງຢູ່ທີ່ຮ້ານຄ້າໄດ້

ແຮງງານຂ້າມຊາດ MOU ຕ້ອງໄດ້ຮັບການວ່າຈ້າງໂດຍກົງຈາກນາຍຈ້າງຈຶ່ງ ຈະເຮັດວຽກໄດ້ແລະເຊິ່ງກໍ່ຫມາຍຄວາມວ່າ,,ຫ້າມບໍ່ໃຫ້ເຮັດວຽກ ອິດສະຫລະຕ່າງໆດ້ວຍຕົນເອງແບບທີ່ບໍ່ມີນາຍຈ້າງ





## ປັດຈຸບັນນີ້, ນາຍຈ້າງໃນປະເທດໄທສາມາດຈ້າງແຮງງານຂ້າມຊາດເປັນ ພະນັກງານຂາຍເຄື່ອງຢູ່ຮ້ານຄ້າຕ່າງໆໄດ້ແລ້ວໂດຍຜ່ານ MOU

ໂຕຕ້າທີ່ຈະສາມາດຈ້າງແຮງງານຂ້າມຊາດເຫລົ່ານີ້ເພື່ອເປັນພະນັກງານ ຂາຍເຄື່ອງຢູ່ຕາມຮ້ານຄ້າຕ່າງໆນັ້ນ, ກໍ່ແມ່ນຂຶ້ນກັບການຈ່າຍຄ່າພາສີ ແລະຂະຫນາດຂອງພະນັກງານໃນບໍລິສັດ

www.mitrthai.com

Migrant Working Group



# ການຈ້າງແຮງງານຂ້າມຊາດ CLMV ເປັນພະນັກງານຂາຍເຄື່ອງຢູ່ຮ້ານຄ້າໂດຍຜ່ານ MOU

## ຂໍ້ກຳນົດສຳລັບນາຍຈ້າງ




ນາຍຈ້າງຕ້ອງຈ້າງແຮງງານຂ້າມຊາດຂອງເຂົາເຈົ້າໂດຍຜ່ານ MOU




ແຮງງານຂ້າມຊາດທີ່ເຮັດວຽກເປັນພະນັກງານຂາຍເຄື່ອງນັ້ນ, ຕ້ອງສາມາດສື່ສານພາສາໄທ



ນາຍຈ້າງຕ້ອງໄດ້ຮັບການອະນຸຍາດຢ່າງເປັນທາງການເພື່ອດຳເນີນທຸລະກິດການຄ້າໄດ້



ໃນໃບອະນຸຍາດຂອງແຮງງານຂ້າມຊາດນັ້ນ, ຕ້ອງລະບຸອາຊີບວ່າເປັນພະນັກງານຂາຍເຄື່ອງຢູ່ຮ້ານຄ້າ

มิตรไทย www.mitrthai.com Migrant Working Group IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE



# ວຽກປະເພດຕ່າງໆທີ່ແຮງງານຂ້າມຊາດສາມາດເຮັດໄດ້ນອກຈາກວຽກທີ່ໃຊ້ແຮງງານ



ແຮງງານຂ້າມຊາດສາມາດເຮັດວຽກເປັນຊ່າງກໍ່ສ້າງ, ພະນັກງານຂາຍເຄື່ອງຢູ່ຮ້ານຄ້າ, ແລະວຽກໃນຂະແໜງອຸດສາຫະກຳຕ່າງໆຕາມລາຍການຂ້າງລຸ່ມນີ້ໄດ້



ກະສິກຳ / ລ້ຽງສັດ / ປະມົງ / ປ່າໄມ້



ການເຮັດເກີບ



ການເຮັດໝວກ



ການຕັດຫຍິບ



ເຄື່ອງປັ້ນດິນເຜົາ



ການເຮັດມີດ



ການຈັດຕຽງ & ມ້ຽນຜ້າຫົ່ມ



ຊ່າງກໍ່ / ຊ່າງໄມ້ / ການກໍ່ສ້າງອາຄານ



ເພື່ອທີ່ຈະເຮັດວຽກເຫລົ່ານີ້ໄດ້, ແຮງງານຂ້າມຊາດຕ້ອງປ່ຽນໃບອະນຸຍາດເຮັດວຽກ, ເຊິ່ງກໍ່ແມ່ນຈາກວຽກເດີມທີ່ໃຊ້ແຮງງານ, ໃຫ້ມາເປັນວຽກທີ່ຢູ່ໃນລາຍການຂ້າງເທິງນັ້ນກ່ອນ


มิตรไทย www.mitrthai.com Migrant Working Group IOM UN MIGRATION
Schweizerische Eidgenossenschaft Confédération suisse Confederazione Svizzera Confederaziun svizra
Swiss Agency for Development and Cooperation SDC
PROMISE

# ຄ່າທຳນຽມການຈັດຫາງານ ແລະ ຄ່າໃຊ້ຈ່າຍໃນການຈັດຫາງານ ສຳລັບແຮງງານຂ້າມຊາດ CLMV




ບໍລິສັດຈັດຫາງານຕ້ອງບໍ່ເກັບຄ່າທຳນຽມການຈັດຫາງານໃນປະເທດໄທຈາກແຮງງານຂ້າມຊາດທີ່ຢູ່ພາຍໃຕ້ MOU

ອີງຕາມກົດໝາຍຂອງໄທ, ນາຍຈ້າງສາມາດຫັກຄ່າໃຊ້ຈ່າຍໃນການຈັດຫາງານຕາມຕົວຈິງໄດ້ສູງສຸດ 10 ເປີເຊັນຂອງເງິນເດືອນຂອງບຸກຄົນທີ່ເປັນແຮງງານ, ໂດຍໄດ້ຮັບການຍິນຍອມເຫັນດີຈາກແຮງງານ, ເຊິ່ງແມ່ນສຳລັບຄ່າໃຊ້ຈ່າຍທີ່ນາຍຈ້າງໄດ້ຈ່າຍລ່ວງໜ້າໃຫ້ແກ່ແຮງງານ ລວມທັງຄ່າໜັງສືຜ່ານແດນ, ໃບອະນຸຍາດເຮັດວຽກ, ຄ່າທຳນຽມ, ຄ່າກວດສຸຂະພາບ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນໃນປະເທດຕົ້ນທາງຂອງແຮງງານ

## ຄ່າໃຊ້ຈ່າຍທົ່ວໄປສຳລັບແຮງງານຂ້າມຊາດ CLMV ໃນປະເທດໄທ




ຄ່າທຳນຽມໜັງສືຜ່ານແດນ (ຂຶ້ນກັບການປະກາດຂອງແຕ່ລະປະເທດ)

ຄ່າໃບອະນຸຍາດເຮັດວຽກ = 1,900 ບາດ ເປັນເວລາ 2 ປີ
ຄ່າບັດສີບົວ = 60 ບາດ

ຄ່າທຳນຽມວີຊ່າ = 1,900 ບາດຕໍ່ປີ (ສາມາດຂໍຕໍ່ອາຍຸໄດ້ 30 ມື້ກ່ອນວັນໝົດອາຍຸ)



ຄ່າກວດສຸຂະພາບ = 500 ບາດ;
ຄ່າປະກັນໄພສຸຂະພາບ = 3,200 ບາດ ເປັນເວລາ 2 ປີ,
ຫລືສົ່ງເງິນສົມທົບຂອງແຮງງານເຂົ້າໃນກອງທຶນປະກັນສັງຄົມ, ເຊິ່ງເທົ່າກັບ 5% ຂອງເງິນເດືອນໃນແຕ່ລະເດືອນ


มิตรไทย www.mitrthai.com Migrant Working Group

IOM UN MIGRATION

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC

PROMISE

ຕທ.໑໑
WP.11

# ການປ່ຽນແປງການຈ້າງງານສຳລັບແຮງງານຂ້າມຊາດ







## ແຮງງານຂ້າມຊາດຕ້ອງຊອກຫານາຍຈ້າງໃຫມ່ພາຍໃນ 30 ວັນ

ນາຍຈ້າງໃຫມ່ຕ້ອງລາຍງານການຈ້າງງານ ແລະ ເງິນປະກັນ. ແຮງງານຂ້າມຊາດຕ້ອງລາຍງານການຈ້າງງານໃຫມ່ຂອງເຂົາເຈົ້າພາຍໃນ 15 ວັນ ຫລັງຈາກທີ່ເຂົາເຈົ້າເລີ່ມວຽກໃຫມ່



ໃນໄລຍະການແຜ່ລະບາດຂອງພະຍາດ COVID-19, ແຮງງານຂ້າມຊາດທີ່ໄດ້ຈົດທະບຽນຢູ່ແລ້ວແມ່ນໄດ້ຮັບອະນຸຍາດໃຫ້ປ່ຽນນາຍຈ້າງພາຍໃນ 60 ມື້ຈົນເຖິງເຖິງວັນທີ 13 ກຸມພາ 2023

## ແຮງງານຂ້າມຊາດສາມາດປ່ຽນນາຍຈ້າງໄດ້ໂດຍມີເງື່ອນໄຂ 6 ປະການ ດັ່ງຕໍ່ໄປນີ້

1. ນາຍຈ້າງຂອງພວກເຂົາເຈົ້າໄດ້ຢຸດຕິການຈ້າງງານຫລືໄດ້ເສຍຊີວິດໄປແລ້ວ
2. ນາຍຈ້າງຂອງພວກເຂົາເຈົ້າລົ້ມລະລາຍ
3. ນາຍຈ້າງຂອງພວກເຂົາເຈົ້າໄດ້ທາລຸນຫລືທຳຮ້າຍຮ່າງກາຍຂອງພວກເຂົາເຈົ້າ
4. ນາຍຈ້າງຂອງພວກເຂົາເຈົ້າບໍ່ປະຕິບັດຕາມສັນຍາການຈ້າງງານ ຫລື ກົດຫມາຍວ່າດ້ວຍການປົກປ້ອງແຮງງານ
5. ພວກເຂົາເຮັດວຽກພາຍໃຕ້ເງື່ອນໄຂຫລືເຮັດວຽກຢູ່ໃນສະພາບແວດລ້ອມທີ່ອາດຈະເປັນອັນຕະລາຍຕໍ່ຮ່າງກາຍຫຼືຈິດໃຈຂອງພວກເຂົາເຈົ້າ
6. ນາຍຈ້າງໃຫມ່ຂອງພວກເຂົາເຈົ້າໄດ້ຕົກລົງທີ່ຈະຊົດເຊີຍຄ່າເສຍຫາຍໃຫ້ກັບນາຍຈ້າງຄົນກ່ອນ

มิตรไทย
www.mitrthai.com
Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE
POVERTY REDUCTION THROUGH SAFE MIGRATION, SKILLS DEVELOPEMENT AND ENHANCED JOB PLACEMENT

# ກົດລະບຽບການເຂົ້າເມືອງ: ການອາໄສຢູ່ໃນປະເທດໄທໃນຖານະເປັນແຮງງານຂ້າມຊາດຈາກ CLMV




## ແຮງງານຂ້າມຊາດຕ້ອງລາຍງານຕົວ 90 ວັນທີ່ສຳນັກງານກວດຄົນເຂົ້າເມືອງ

(ການລາຍງານຕົວນີ້ແມ່ນສາມາດໄປແຈ້ງດ້ວຍຕົນເອງ ຫລື ມອບຫມາຍໃຫ້ຜູ້ອື່ນນຳຫນັງສືໄປແຈ້ງແທນ ຫລືອາດມີຫນັງສືແຈ້ງໂດຍຜ່ານທາງໄປສະນີກໍ່ໄດ້)

ການແຈ້ງດັ່ງກ່າວ, ກໍ່ແມ່ນສຳລັບການແຈ້ງການພັກອາໄສ ທີ່ຢູ່ເກີນ 90 ວັນ ເຊິ່ງສາມາດແຈ້ງການພັກອາໄສນີ້ໄດ້**ກ່ອນ 15 ວັນຫລືຫລັງ 7 ວັນ** ນັບຈາກວັນຄົບກຳນົດ

**ຖ້າຫາກແຮງງານຂ້າມຊາດລາຍງານຕົວ ເກີນກຳນົດນັດ ຫລືເກີນກຳນົດທີ່ຈະຕ້ອງແຈ້ງ** ແຮງງານຂ້າມຊາດຈະຕ້ອງໄປລາຍງານຕົວດ້ວຍຕົນເອງແລະກໍ່ຈະຖືກປັບໃຫມ 2,000 ບາດ

**ຖ້າແຮງງານຂ້າມຊາດຖືກຈັບ**, ກໍ່ຈະຖືກປັບໃຫມ 5,000 ບາດ




## ຖ້າແຮງງານຂ້າມຊາດເດີນທາງໄປຈັງຫວັດອື່ນແລະຢູ່ທີ່ນັ້ນເກີນ 24 ຊົ່ວໂມງ, ເຂົາເຈົ້າຕ້ອງລາຍງານຕົວເອງຢູ່ທີ່ສະຖານີຕຳຫລວດທ້ອງຖິ່ນ**ພາຍໃນ 48 ຊົ່ວໂມງ**ຫລັງຈາກໄດ້ໄປຮອດ




## ການຕໍ່ອາຍຸວີຊ່າ 2 ປີ

**ຄ່າທຳນຽມໃນການຕໍ່ວີຊ່າແມ່ນ 1,900 ບາດຕໍ່ຫນຶ່ງປີ** (ແຮງງານຂ້າມຊາດທີ່ກຳລັງຢູ່ພາຍໃຕ້ຂັ້ນຕອນຂອງການຕໍ່ອາຍຸວີຊ່າຢູ່ພາຍໃນປະເທດນັ້ນ ແມ່ນຕ້ອງໄດ້ຕໍ່ອາຍຸວີຊ່າ ປີລະຄັ້ງ

**ຖ້າພວກເຂົາເຈົ້າຢູ່ອາໄສເກີນໄລຍະເວລາທີ່ທາງການໄດ້ອະນຸຍາດໃຫ້ນັ້ນ**, ກໍ່ຈະຖືກປັບໃຫມ 500 ບາດຕໍ່ວັນ ແຕ່ທັງຫມົດບໍ່ເກີນ 20,000 ບາດ

ຢ່າລືມ!

# ເຈົ້າຂອງບ້ານ ຕ້ອງຍື່ນແບບຟອມ TM.30 (ມາດຕາ 38)






**ເປັນຄວາມຮັບຜິດຊອບຂອງເຈົ້າຂອງບ້ານທີ່ເປັນຜູ້ໃຫ້ທີ່ພັກ (ເຮືອນຫລືໂຮງແຮມ)** ສໍາລັບຄົນຕ່າງປະເທດ, ທີ່ຈະລາຍງານການເຂົ້າພັກເຊົາຂອງເຂົາເຈົ້າໂດຍໃຊ້ແບບຟອມ TM.30 ກັບເຈົ້າຫນ້າທີ່ຢູ່ສໍານັກງານກວດຄົນເຂົ້າເມືອງ **ພາຍໃນ 24 ຊົ່ວໂມງ**ຫລັງຈາກຄົນຕ່າງປະເທດເລີ່ມຕົ້ນເຂົ້າພັກເຊົາ, ຖ້າບໍ່ມີກົມກວດຄົນເຂົ້າເມືອງຢູ່ໃນຈັງຫວັດນັ້ນ, ເຂົາເຈົ້າກໍ່ຕ້ອງໄປລາຍງານຢູ່ທີ່ສະຖານີຕໍາຫລວດທ້ອງຖິ່ນ

ຂໍ້ສັງເກດ:



**ໃນກໍລະນີທີ່ຄົນຕ່າງປະເທດບໍ່ໄດ້ອາໄສຢູ່ກັບນາຍຈ້າງ, ກໍ່ເປັນຄວາມຮັບຜິດຊອບຂອງເຈົ້າຂອງບ້ານ**ທີ່ໃຫ້ທີ່ພັກອາໄສໃຫ້ຄົນຕ່າງປະເທດນັ້ນ, ເປັນຜູ້ລາຍງານ

ໃນກໍລະນີທີ່ນາຍຈ້າງໄດ້ໃຫ້ທີ່ພັກອາໄສສໍາລັບແຮງງານຂ້າມຊາດຂອງຕົນເອງນັ້ນ, ນາຍຈ້າງກໍ່ສາມາດນໍາໃຊ້ຫຼັກຖານຂອງສັນຍາທີ່ຢູ່ອາໄສສໍາລັບການລາຍງານ



**ຖ້າເຈົ້າຂອງບ້ານ ( ຫລືນາຍຈ້າງທີ່ເປັນເຈົ້າຂອງບ້ານ ) ບໍ່ລາຍງານ** ກໍ່ຈະຖືກປັບໃຫມບໍ່ເກີນ 2,000 ບາດ **ຍົກເວັ້ນກໍລະນີທີ່ເປັນຜູ້ຈັດການໂຮງແຮມ, ກໍ່ຈະຖືກປັບໃຫມຕັ້ງແຕ່ 2,000 ຫາ 10,000 ບາດ**



# ການເຂົ້າເຖິງການບໍລິການດ້ານສຸຂະພາບ

ປະເທດໄທເປັນຈຸດຫມາຍປາຍທາງທີ່ເປັນທີ່ນິຍົມຂອງແຮງງານຂ້າມຊາດຈາກປະເທດເພື່ອນບ້ານ ເພາະເຕັມໄປດ້ວຍໂອກາດໃນການຫາວຽກເຮັດງານທຳ ແລະ ໂອກາດໃນການພັດທະນາສີມືແຮງງານ. ນອກຈາກນັ້ນ, ກໍ່ຍັງສາມາດເປັນບ່ອນທີ່ສະເຫນີໂອກາດໃນການສ້າງລາຍໄດ້ແລະປັບປຸງຄຸນນະພາບຂອງຊີວິດຂອງພວກເຂົາເຈົ້າ. ແຕ່ບາງຄັ້ງ, ຄົນເຮົາກໍ່ເຈັບປ່ວຍໄດ້ຢ່າງກະທັນຫັນ, ເຊິ່ງເປັນເຫດທີ່ຈະເຮັດໃຫ້ຄ່າຈ້າງແລະວຽກຂອງທ່ານມີຄວາມສ່ຽງ

ດັ່ງນັ້ນທ່ານຈະເຂົ້າເຖິງການບໍລິການດ້ານສຸຂະພາບໃນປະເທດໄທໄດ້ແນວໃດ



## ກອງທຶນປະກັນສັງຄົມ



## ກອງທຶນເງິນທົດແທນ



## ການປະກັນໄພສຸຂະພາບຂອງແຮງງານຂ້າມຊາດ

มิตรไทย
www.mitrthai.com
Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE
POVERTY REDUCTION THROUGH SAFE MIGRATION, SKILLS DEVELOPMENT AND ENHANCED JOB PLACEMENT



# ສິດຜົນປະໂຫຍດ ຂອງກອງທຶນປະກັນສັງຄົມ ທີ່ສຳຄັນ 7 ຢ່າງ

ເງື່ອນໄຂສຳລັບແຕ່ລະປະເພດຂອງສິດຜົນປະໂຫຍດນັ້ນ, ກໍ່ແມ່ນຂຶ້ນກັບໄລຍະເວລາຂອງສົ່ງເງິນສົມທົບເຂົ້າໃນກອງທຶນປະກັນສັງຄົມ



## ການເຈັບປ່ວຍ

ເງື່ອນໄຂ: ສົ່ງເງິນສົມທົບຢ່າງຫນ້ອຍ 3 ເດືອນ ໃຫ້ ກອງທຶນປະກັນສັງຄົມ (SSF) ພາຍໃນ 15 ເດືອນກ່ອນການເຈັບປ່ວຍ

## ຄວາມພິການ/ຄວາມບໍ່ປົກກະຕິ

ເງື່ອນໄຂ: ສົ່ງເງິນສົມທົບຢ່າງຫນ້ອຍ 3 ເດືອນ ໃຫ້ SSF ພາຍໃນ 15 ເດືອນກ່ອນມີຄວາມພິການ

## ການເກີດລູກ

ເງື່ອນໄຂ: ສົ່ງເງິນສົມທົບຢ່າງຫນ້ອຍ 5 ເດືອນ ໃຫ້ SSF ພາຍໃນ 15 ເດືອນກ່ອນການເກີດລູກ

## ເງິນອຸດຫນູນເດັກ

ເງື່ອນໄຂ: ສົ່ງເງິນສົມທົບຢ່າງຫນ້ອຍ12 ເດືອນ ໃຫ້ SSF ພາຍໃນ 36 ເດືອນ

## ເງິນບຳນານໄວສູງອາຍຸ

ຂຶ້ນກັບໄລຍະເວລາຂອງການສົ່ງເງິນສົມທົບຈາກບຸກຄົນທີ່ລົງທະບຽນ

## ການເສຍຊີວິດ

ເງື່ອນໄຂ: ສົ່ງເງິນສົມທົບຢ່າງຫນ້ອຍ 1 ເດືອນກັບ SSF ພາຍໃນ 6 ເດືອນກ່ອນການເສຍຊີວິດແລະສາເຫດຂອງການເສຍຊີວິດຕ້ອງບໍ່ແມ່ນມາຈາກການເຮັດວຽກ

## ການຫວ່າງງານ

ເງື່ອນໄຂ: ຫລັງຈາກ 6 ເດືອນທີ່ໄດ້ສົ່ງເງິນສົມທົບໃຫ້ SSF ພາຍໃນ 15 ເດືອນກ່ອນການຫວ່າງງານ.

มิตรไทย www.mitrthai.com Migrant Working Group
IOM UN MIGRATION
Schweizerische Eidgenossenschaft Confédération suisse Confederazione Svizzera Confederaziun svizra
Swiss Agency for Development and Cooperation SDC
PROMISE
POVERTY REDUCTION THROUGH SAFE MIGRATION, SKILLS DEVELOPMENT AND ENHANCED JOB PLACEMENT



# ກອງທຶນປະກັນສັງຄົມ

ປະເທດໄທມີໂຄງການປະກັນສັງຄົມໃຫ້ແຮງງານຂ້າມຊາດທີ່ໃຫ້ສິດຜົນປະໂຫຍດ ແລະ
ການປົກປ້ອງທີ່ເທົ່າທຽມກັນກັບແຮງງານໄທ
ແຕ່ພວກເຮົາຈະເຂົ້າເຖິງສິດຜົນປະໂຫຍດ ແລະການປົກປ້ອງເຫລົ່ານັ້ນໄດ້ແນວໃດ




ໃຫ້ສະແດງໃບອະນຸຍາດເຮັດວຽກຂອງທ່ານ ແລະເອກະສານທີ່ລະບຸຕົວຕົນເພື່ອນໍາໄປໃຊ້ໃນການລົງທະບຽນເຂົ້າກອງທຶນປະກັນສັງຄົມ



ນາຍຈ້າງຂອງທ່ານຈໍາເປັນຕ້ອງລົງທະບຽນທ່ານສໍາລັບການປະກັນສັງຄົມ,ເຊິ່ງອີງຕາມກົດຫມາຍວ່າດ້ວຍປະກັນສັງຄົມພາຍໃນ 30 ວັນຫລັງຈາກມື້ທໍາອິດທີ່ທ່ານເລີ່ມເຮັດວຽກ ເຊິ່ງກໍ່ໄດ້ລະບຸໄວ້ໃນໃບອະນຸຍາດເຮັດວຽກຂອງທ່ານ



ເມື່ອທ່ານໄດ້ລົງທະບຽນແລ້ວ, ທ່ານກໍ່ຕ້ອງສົມທົບ 5% ຂອງເງິນເດືອນ, ສູງສຸດກໍ່ແມ່ນ 750 ບາດຕໍ່ເດືອນ ໃຫ້ແກ່ກອງທຶນປະກັນສັງຄົມ. ນາຍຈ້າງຂອງທ່ານກໍ່ຈະສົ່ງເງິນສົມທົບ 5% ແລະລັດຖະບານກໍ່ຈະສົ່ງເງິນສົມທົບ 2.75%

ນາຍຈ້າງຂອງທ່ານຕ້ອງຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມກ່ອນວັນທີ 15 ຂອງເດືອນຕໍ່ໄປ



ທ່ານສາມາດໄປຮັບການປິ່ນປົວຢູ່ໂຮງໝໍທີ່ໄດ້ກໍານົດໄວ້ໃນບັດປະກັນສັງຄົມໂດຍບໍ່ມີການເສຍຄ່າໃດໆ
ສໍາລັບເຫດສຸກເສີນຫລືອຸປະຕິເຫດ ທ່ານກໍ່ສາມາດໄປໂຮງຫມໍຂອງລັດທີ່ຢູ່ໃກ້ທີ່ສຸດ ແຕ່ຖ້າທ່ານໄປໂຮງຫມໍເອກະຊົນ, ທ່ານກໍ່ອາດຈະມີຄວາມຈໍາເປັນທີ່ຈະຕ້ອງໄດ້ອອກຄ່າໃຊ້ຈ່າຍເອງກ່ອນ

มิตรไทย
www.mitrthai.com
Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE
POVERTY REDUCTION THROUGH SAFE MIGRATION, SKILLS DEVELOPMENT AND ENHANCED JOB PLACEMENT



# ກອງທຶນ
# ເງິນຊົດເຊີຍ



ແທນທີ່ຈະໃຊ້ກອງທຶນປະກັນສັງຄົມ, ແຮງງານຂ້າມຊາດໃນຂະແໜງກະສິກຳ, ການປະມົງ, ປ່າໄມ້ ແລະການລ້ຽງສັດກໍ່ຍັງສາມາດໄດ້ຮັບສິດຜົນປະໂຫຍດຈາກກອງທຶນເງິນຊົດເຊີຍໃນກໍລະນີເຈັບປ່ວຍ, ປະສົບອັນຕະລາຍຈາກການເຮັດວຽກ, ການສູນເສຍອະໄວຍະວະ, ຫລືເສຍຊີວິດຍ້ອນການເຮັດວຽກ




ສຳລັບກອງທຶນນີ້, ນາຍຈ້າງຂອງທ່ານຈຳເປັນຕ້ອງຈ່າຍເງິນສົມທົບໃຫ້ກັບກອງທຶນເງິນຊົດເຊີຍ ໃນອັດຕາ 0.2-1% ຂອງເງິນເດືອນ, ເຊິ່ງກໍ່ຂຶ້ນກັບຄວາມສ່ຽງແລະປະເພດຂອງວຽກງານ



ໂດຍຈະມີຄວາມແຕກຕ່າງຈາກການຈ່າຍເງິນສົບທົບຂອງທ່ານເຊົ້າໃນກອງທຶນປະກັນສັງຄົມ, ນາຍຈ້າງຂອງທ່ານບໍ່ສາມາດເກັບເງິນ ຫລື ຫັກເງິນຈາກຄ່າຈ້າງຂອງທ່ານເພື່ອໃຫ້ກວມເອົາຄ່າໃຊ້ຈ່າຍຂອງກອງທຶນເງິນຊົດເຊີຍ



# ການປະກັນໄພສຸຂະພາບ ສຳລັບແຮງງານຂ້າມຊາດ



ແຮງງານໃນບາງຂະແໜງການຂອງການຈ້າງງານນັ້ນ, ແມ່ນບໍ່ໄດ້ຮັບການຄຸ້ມຄອງໂດຍກອງທຶນປະກັນສັງຄົມ, ເຊິ່ງກໍ່ລວມທັງວຽກບໍລິການໃນຄົວເຮືອນ, ແລະ ວຽກງານກະສິກຳ, ປ່າໄມ້ ແລະ ລ້ຽງສັດຕາມລະດູການ. ແຮງງານເຫລົ່ານີ້ສາມາດລົງທະບຽນໃນໂຄງການປະກັນໄພສຸຂະພາບຂອງແຮງງານຂ້າມຊາດທີ່ຄຸ້ມຄອງໂດຍກະຊວງສາທາລະນະສຸກ




ໃນການລົງທະບຽນ, ທ່ານຈຳເປັນຕ້ອງນຳເອົາ**ເອກະສານທີ່ໃຊ້ລະບຸຕົວຕົນຂອງທ່ານ** (**ເຊັ່ນ: ໜັງສືຜ່ານແດນ, ບັດສີບົວ**) ແລະ**ໃບອະນຸຍາດເຮັດວຽກ**ໄປທີ່ໂຮງໝໍຂອງລັດແຫ່ງໃດແຫ່ງໜຶ່ງທີ່ມີຢູ່ໃນລາຍຊື່, ເຊິ່ງຢູ່ໃນເຂດທີ່ຢູ່ອາໃສຂອງທ່ານເພື່ອຮັບການກວດພະຍາດ ແລະຊື້ປະກັນໄພສຸຂະພາບຂອງທ່ານ

ຖ້າຫາກວ່ານີ້ແມ່ນຄັ້ງທຳອິດທີ່ທ່ານລົງທະບຽນ, ການຄຸ້ມຄອງຂອງທ່ານກໍ່ຈະເລີ່ມຕົ້ນພາຍໃນ 15 ມື້ຫລັງຈາກການຈ່າຍເງິນປະກັນໄພຄັ້ງທຳອິດ. ເຖິງຢ່າງໃດກໍ່ຕາມ, ຖ້າເປັນການຕໍ່ອາຍຸການປະກັນໄພຂອງທ່ານທີ່ມີຢູ່ແລ້ວ, ການຄຸ້ມຄອງຈະເລີ່ມຕົ້ນທັນທີ



ເມື່ອທ່ານມີຄຳຖາມໃດໆກ່ຽວກັບການບໍລິການທາງດ້ານສຸຂະພາບຫລືການປິ່ນປົວ, ກໍ່ຢ່າລັງເລທີ່ຈະສອບຖາມຜູ້ຊ່ຽວຊານ, ເຊັ່ນວ່າທ່ານໝໍຫລືເຈົ້າໜ້າທີ່ໃນໂຮງໝໍ. ບໍ່ສາມາດນຳເອົາຜົນການກວດພະຍາດຂອງທ່ານໄປເປີດເຜີຍຫລືແບ່ງປັນກັບບຸກຄົນທີສາມ ຖ້າຫາກບໍ່ມີການຍິນຍອມເຫັນດີຈາກທ່ານກ່ອນ

มิตรไทย
www.mitrthai.com
Migrant Working Group
IOM UN MIGRATION
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PROMISE
POVERTY REDUCTION THROUGH SAFE MIGRATION, SKILLS DEVELOPEMENT AND ENHANCED JOB PLACEMENT



# ການປົກປ້ອງແຮງງານ ໃນຂະແຫນງການປະມົງ



ຖ້າທ່ານເຮັດວຽກຢູ່ໃນຂະແຫນງການປະມົງ, ທ່ານກໍ່ຍັງໄດ້ຮັບການປົກປ້ອງໂດຍກົດຫມາຍວ່າດ້ວຍການປົກປ້ອງແຮງງານໃນຂະແຫນງການປະມົງ ປີ ພສ. 2562 (ຄສ. 2019). ໃນນັ້ນ, ກໍ່ໄດ້ລະບຸໄວ້ວ່າ, ນາຍຈ້າງຫລືເຈົ້າຂອງເຮືອປະມົງກໍ່ຈະຕ້ອງເຮັດປະກັນໄພສໍາລັບຜູ້ແຮງງານໃນກໍລະນີທີ່ມີການສູນເສຍລາຍໄດ້ທີ່ເນື່ອງມາຈາກການເຈັບປ່ວຍ, ປະສົບໄພອັນຕະລາຍ, ຄວາມພິການ, ຫລືການເສຍຊີວິດທີ່ບໍ່ໄດ້ມາຈາກການເຮັດວຽກ



ເຈົ້າຂອງເຮືອປະມົງ ແລະແຮງງານສາມາດມີຂໍ້ຕົກລົງກ່ຽວກັບສິດຜົນປະໂຫຍດຂອງສະຫວັດດີການທາງດ້ານສຸຂະພາບ, ບໍ່ວ່າຈະລວມຢູ່ໃນປະກັນໄພສາທາລະນະທີ່ຢູ່ພາຍໃຕ້ກະຊວງສາທາລະນະສຸກ, ເຊິ່ງນາຍຈ້າງໄດ້ຊື້ໄວ້ໃຫ້ ຫລືໂດຍການລົງທະບຽນຜ່ານລະບົບປະກັນສັງຄົມສໍາລັບການປົກປ້ອງທາງສັງຄົມເພີ່ມເຕີມ, ລວມທັງການເສຍຊີວິດ, ການຫວ່າງງານ, ແລະຄວາມພິການ ; ຫລືໂດຍການປະກັນໄພໃຫ້ແກ່ແຮງງານເພື່ອທີ່ຈະສາມາດຮັບສິດປະໂຫຍດເຫລົ່ານີ້ໂດຍຜ່ານບໍລິສັດປະກັນໄພເອກະຊົນກໍ່ໄດ້

